ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------------------.

ກະຊວງ ກະສິກຳ ແລະ ປ່າໄມ້ .1543

ຫ້ອງການກະຊວງ

ເລກທີ ............/ຫກ.ປຝ.03

ວັນທີ ...06 OCT 2003

# ແຈ້ງການ

ເຖິງ: ທ່ານ ຫົວໜ້າ ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ແລະ ເຂດພິເສດ ໃນຂອບເຂດທົ່ວປະເທດ.

ເລື້ອງ: ການສົ່ງພືດ ຕະກຸນໝາກກ້ຽງ (Citrus) ໄປຍັງສາທາລະນະລັດ ເກົາຫຼີ.

- ອີງຕາມ ການຊີ້ນຳຂອງ ທ່ານລັດຖະມົນຕີ ວ່າການກະຊວງ ກະສິກຳ ແລະ ປ່າໄມ້ ໃນວັນທີ 30/9/2003.
- ອີງຕາມ ບົດລາຍງານ ຂອງກົມປູກຝັງ ກ່ຽວກັບ ຈົດໝາຍແຈ້ງການ ຂອງ ຫ້ອງການ ກັກກັນພືດ ແຫ່ງຊາດ ກະຊວງ ກະສິກຳ ແລະ ປ່າໄມ້, ສາທາລະນະລັດ ເກົາຫຼີ ໃນການສົ່ງພືດ ຕະກຸນໝາກກ້ຽງ(Citrus) ໄປຍັງສາທາລະນະລັດ ເກົາຫຼີ ເລກທີ 0797/ປຝ.2003 ລົງວັນທີ 29/9/2003.

ຫ້ອງການກະຊວງ ກະສິກຳ ແລະ ປ່າໄມ້ ຂໍແຈ້ງມາຍັງທ່ານ ຊາບວ່າ ຫ້ອງການ ກັກກັນພືດ ແຫ່ງຊາດ. ກະຊວງ ກະສິກຳ ແລະ ປ່າໄມ້, ສາທາລະນະລັດ ເກົາຫຼີ ໄດ້ສົ່ງ ຈົດຫມາຍແຈ້ງການ ມາຫາກົມປູກຝັງ ສ ປ.ປ.ລາວ ກ່ຽວກັບ ພະຍາດ ໃບດ່າງຂອງໝາກກ້ຽງ ( Citrus greening disease) ພະຍາດດັ່ງກ່າວ ມີຊື່ວິທະຍາສາດວ່າ: *Liberobacter asiaticum* ແລະ *L. africanum*.

ສະນັ້ນ ສາທາລະນະລັດ ເກົາຫຼີ ຈຶ່ງຫ້າມເດັດຂາດ ບໍ່ໃຫ້ສົ່ງ ໃບ, ໝາກ, ຕົ້ນຕໍ, ກິ່ງພັນ, ເມັດ, ແກ່ນ, ຍອດພັນ ແລະ ທຸກຊິ້ນສ່ວນ ຂອງພືດ ຕະກຸນໝາກກ້ຽງ ເຂົ້າໄປຍັງປະເທດ ສາທາລະນະລັດ ເກົາຫຼີ ນັບຕັ້ງແຕ່ວັນທີ 21 ກັນຍາ 2003 ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ.

ຫົວໜ້າ ຫ້ອງການ ກະຊວງ ກະສິກຳ ແລະ ປ່າໄມ້

ນາຍ ວົງສີ ນິບປະສົມ

ບ່ອນນຳສົ່ງ
- ກົມກວດກາ 1 ສະບັບ.
- ກົມປູກຝັງ 1 ສະບັບ.
- ຫ້ອງການ ກະຊວງ ການເງິນ 1 ສະບັບ.
- ຫ້ອງການ ກະຊວງ ການຄ້າ 1 ສະບັບ.
- ສະພາການຄ້າ 1 ສະບັບ.
- ເກັບມ້ຽນ 1 ສະບັບ.